ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 12 /ທຄຕລ ..ສພທ..........

ນະຄອນຫຼວງວຽງຈັນ, ວັນທີ: ....27 APR 2023.........

# ມະຕິ

## ກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2022.

## ວັນທີ 27/04/2023

ກອງປະຊຸມສາມັນຜູ້ຖືຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ປະຈຳປີ 2022 (ຕໍ່ໄປນີ້ຮຽກວ່າ: "ກອງປະຊຸມ") ໄດ້ຈັດຂຶ້ນໃນເວລາ 14:30 ໂມງ ຂອງວັນທີ 27 ເມສາ 2023 ທີ່ໂຮງແຮມລາວພລາຊາ ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ທ່ານ ຄຳສຸກ ສູນດາລາ, ຮັກສາການປະທານສະພາບໍລິຫານ ທຄຕລ ພ້ອມດ້ວຍສະມາຊິກສະພາບໍລິຫານ ທຄຕລ, ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈຳນວນ 35 ທ່ານ, ຜູ້ມອບສິດຈຳນວນ 154 ທ່ານ ຊຶ່ງລວມຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງປະຊຸມເທົ່າກັບ 158.143.510 ຮຸ້ນ, ນັບທັງ 21.822.227 ຮຸ້ນ ທີ່ຖືກມອບສິດ, ບັນລຸອັດຕາສ່ວນ 76,132% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ ແລະ ຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດຳເນີນກອງປະຊຸມໄດ້ຕາມກົດລະບຽບຂອງ ທຄຕລ ແລະ ກົດໝາຍທີ່ກ່ຽວຂ້ອງ. ສຳລັບຮຸ້ນທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມ ມີຈຳນວນ 49.579.790 ຮຸ້ນ ເທົ່າກັບ 23,868% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.

### ກອງປະຊຸມ ໄດ້ພິຈາລະນາ ແລະ ມີມະຕິດັ່ງນີ້:

**ວາລະທີ 1: ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນສະໄໝວິສາມັນ ທຄຕລ ປະຈຳປີ 2022**

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 158.143.510 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນງານ ແລະ ເອກະສານລາຍງານການເງິນຂອງ ທຄຕລ ປະຈຳປີ 2022**

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 158.143.510 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

**ວາລະທີ 3: ພິຈາລະນາ ແລະ ຮັບຮອງການຈັດສັນກຳໄລ ປະຈຳປີ 2022:**

ການຈັດສັນກຳໄລປະຈຳປີ 2022 ປະຕິບັດດັ່ງນີ້:

- ແບ່ງເຂົ້າຄັງສະສົມຕາມລະບຽບການ: **10%**;
- ຈ່າຍເງິນປັນຜົນ: **100 ກີບ/ຮຸ້ນ**;
- ແບ່ງສ່ວນທີ່ເຫຼືອເຂົ້າຄັງຂະຫຍາຍທຸລະກິດ;
- ມື້ຈ່າຍເງິນປັນຜົນ: **12/05/2023**.
- ຜູ້ຖືຮຸ້ນທີ່ມີສິດໄດ້ຮັບເງິນປັນຜົນ ອີງຕາມການປິດປຶ້ມບັນຊີຜູ້ຖືຮຸ້ນ ວັນທີ 21 ເມສາ 2023.

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 158.088.510 ສຽງ, ເທົ່າກັບ 99,965% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 55.000 ສຽງ, ເທົ່າກັບ 0,035% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 4: ພິຈາລະນາ ແລະ ຮັບຮອງເອົາແຜນການປີ 2023**

ແຜນການປະຈຳປີ 2023 ມີ ບາງຄາດໝາຍຕົວເລກສຳຄັນທຽບໃສ່ຕົວເລກການປະຕິບັດປີ 2022 ມີດັ່ງນີ້:

- **ຍອດຊັບສິນ:** ບໍ່ຫຼຸດ 99.476.000 ລ້ານກີບ ທຽບໃສ່ປະຕິບັດປີ 2022 ເພີ່ມຂຶ້ນ 5%;
- **ເງິນຝາກ:** ບໍ່ຫຼຸດ 91.000.000 ລ້ານກີບ ທຽບໃສ່ປະຕິບັດປີ 2022 ເພີ່ມຂຶ້ນ 5%;
- **ເງິນກູ້:** ບໍ່ຫຼຸດ 50.050.000 ລ້ານກີບ ທຽບໃສ່ປະຕິບັດປີ 2022 ເພີ່ມຂຶ້ນ 17% ຫຼື ຍອດເງິນກູ້ໃຫ້ກວມອັດຕາສ່ວນບໍ່ຫຼຸດ 55% ຂອງຍອດເງິນຝາກທັງໝົດ;
- NPL: ບໍ່ເກີນ 3,50%;
- **ທຶນ:** 2.740.000 ລ້ານກີບ ທຽບໃສ່ປະຕິບັດປີ 2022 ເພີ່ມຂຶ້ນ 16%;
- **ກຳໄລ ກ່ອນອາກອນ:** 250.000 ລ້ານກີບ ທຽບໃສ່ປະຕິບັດປີ 2022 ເພີ່ມຂຶ້ນ 27%;
- **ກຳໄລສຸດທິ (ຫຼັງຫັກອາກອນ):** 200.000 ລ້ານກີບ;
- ແຜນຂະຫຍາຍຕາໜ່າງບໍລິການ 05 ແຫ່ງ;
- ແຜນປະກອບວັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ ແມ່ນຈະເນັ້ນໃສ່ສືບຕໍ່ບັນດາໂຄງການທີ່ຍັງບໍ່ສຳເລັດ, ປ່ຽນແທນສິ່ງເກົ່າທີ່ເປ່ເພ ແລະ ປະກອບເພີ່ມໃໝ່ສິ່ງທີ່ຈຳເປັນ ລວມທັງໝົດ 304 ຕື້ກີບ;

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 158.143.510 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 5: ພິຈາລະນາ ແລະ ຮັບຮອງເອົາຜູ້ກວດສອບອິດສະຫຼະປະຈຳປີ 2023.**

ກອງປະຊຸມ ຮັບຮອງເອົາ ບໍລິສັດ PWC ເປັນຜູ້ດຳເນີນການກວດສອບເອກະສານລາຍງານການເງິນ ປະຈຳປີ 2023 ແລະ ອອກບົດລາຍງານໃຫ້ ທຄຕລ:

- ລາຍງານການກວດສອບເອກະສານລາຍງານການເງິນ;
- ຈົດໝາຍຄຸ້ມຄອງເຖິງຜູ້ບໍລິຫານ;
- ບົດລາຍງານທົບທວນຄືນແບບວິເຄາະ;
- ບົດລາຍງານການທົບທວນຄືນຖານະເງິນກູ້.

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 158.143.510 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 6: ພິຈາລະນາ ແລະ ຮັບຮອງ ການແຕ່ງຕັ້ງປະທານສະພາບໍລິຫານ ທຄຕລ**

ກອງປະຊຸມ ຮັບຮອງ ***ທ່ານ ບຸນປອນ ອັນນະຈິດ***, ຮອງລັດຖະມົນຕີກະຊວງການເງິນ ເປັນປະທານສະພາບໍລິຫານ ທຄຕລ.

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 158.143.510 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ປະທານກອງປະຊຸມ**

**ຄຳສຸກ ສູນດາລາ**